ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

---

ທະນາຄານແຫ່ງ ສປປ ລາວ

ເລກທີ 422/ທຫລ

ນະຄອນຫຼວງວຽງຈັນ, ວັນທີ 30 ພຶດສະພາ 2018

## ຂໍ້ຕົກລົງ

## ວ່າດ້ວຍ ການຍົກເລີກຂໍ້ຕົກລົງ ວ່າດ້ວຍການສະໜອງສິນເຊື່ອເປັນເງິນຕາຕ່າງປະເທດຂອງ ທະນາຄານທຸລະກິດ

- ອີງຕາມກົດໝາຍ ວ່າດ້ວຍທະນາຄານແຫ່ງ ສປປ ລາວ ສະບັບເລກທີ 05/ສພຊ, ລົງວັນທີ 14 ຕຸລາ 1999;
- ອີງຕາມກົດໝາຍ ວ່າດ້ວຍທະນາຄານທຸລະກິດ ສະບັບເລກທີ 03/ສພຊ, ລົງວັນທີ 26 ທັນວາ 2006;
- ອີງຕາມກົດໝາຍ ວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ ສະບັບເລກທີ 55/ສພຊ, ລົງວັນທີ 22 ທັນວາ 2014;
- ອີງຕາມໜັງສືສະເໜີຂອງກົມຄຸ້ມຄອງທະນາຄານທຸລະກິດ ສະບັບເລກທີ 98/ກຄທ, ລົງວັນທີ 28 ພຶດສະພາ 2018.

ຜ່ານການຈັດຕັ້ງປະຕິບັດຂໍ້ຕົກລົງ ວ່າດ້ວຍການສະໜອງສິນເຊື່ອເປັນເງິນຕາຕ່າງປະເທດຂອງທະນາຄານທຸລະກິດ ສະບັບເລກທີ 1008/ທຫລ, ລົງວັນທີ 17 ພະຈິກ 2016, ໄດ້ປະກອບສ່ວນປະຕິບັດນະໂຍບາຍສົ່ງເສີມການນຳໃຊ້ເງິນກີບຢ່າງຕັ້ງໜ້າ, ຄຽງຄູ່ກັນນັ້ນ ກໍ່ມີຂໍ້ຈຳກັດໃນການນຳໃຊ້ແຫຼ່ງທຶນເປັນເງິນຕາຕ່າງປະເທດທີ່ທະນາຄານລະດົມໄດ້. ດັ່ງນັ້ນ, ເພື່ອໃຫ້ທະນາຄານທຸລະກິດ ແລະ ສາຂາທະນາຄານທຸລະກິດຕ່າງປະເທດ ສາມາດນຳໃຊ້ແຫຼ່ງທຶນເປັນເງິນຕາຕ່າງປະເທດ ຢ່າງເປັນເຈົ້າການ, ມີຄວາມປອດໄພ ແລະ ປະກອບສ່ວນພັດທະນາເສດຖະກິດ-ສັງຄົມຂອງ ສປປ ລາວ ໃຫ້ເຕີບໃຫຍ່ຂະຫຍາຍຕົວ.

### ຜູ້ວ່າການທະນາຄານແຫ່ງ ສປປ ລາວ ຕົກລົງ:

**ມາດຕາ 1** ຍົກເລີກຂໍ້ຕົກລົງວ່າດ້ວຍ ການສະໜອງສິນເຊື່ອເປັນເງິນຕາຕ່າງປະເທດຂອງທະນາຄານທຸລະກິດ ສະບັບເລກທີ 1008/ທຫລ, ລົງວັນທີ 17 ພະຈິກ 2016 ທັງໝົດ. ອະນຸຍາດໃຫ້ທະນາຄານທຸລະກິດ ແລະ ສາຂາທະນາຄານທຸລະກິດຕ່າງປະເທດສາມາດສະໜອງສິນເຊື່ອເປັນເງິນຕາຕ່າງປະເທດໄດ້.

**ມາດຕາ 2** ທະນາຄານທຸລະກິດ ແລະ ສາຂາທະນາຄານທຸລະກິດຕ່າງປະເທດທີ່ຕັ້ງຢູ່ ສປປ ລາວ ທີ່ສະໜອງສິນເຊື່ອເປັນເງິນຕາຕ່າງປະເທດຕ້ອງບໍລິຫານສິນເຊື່ອດັ່ງກ່າວ ຢ່າງຮັດກຸມ, ຮັບປະກັນຄວາມຖືກຕ້ອງສອດຄ່ອງຕາມລະບຽບກົດໝາຍທີ່ກ່ຽວຂ້ອງ ແລະ ໃຫ້ກຳນົດໃນຄູ່ມືສິນເຊື່ອ ແລະສັນຍາເງິນກູ້. ທະນາຄານທຸລະກິດ ແລະ ສາຂາທະນາຄານທຸລະກິດຕ່າງປະເທດ ທີ່ປ່ອຍກູ້ເປັນເງິນຕາຕ່າງປະເທດ ບໍ່ອະນຸຍາດໃຫ້ລູກຄ້າເງິນກູ້ຖອນເງິນກູ້ທີ່ເປັນເງິນຕາຕ່າງປະເທດເປັນເງິນສົດໄດ້. ການນຳໃຊ້ເງິນກູ້ທີ່ເປັນເງິນຕາຕ່າງປະເທດ ຕ້ອງສອດຄ່ອງກັບມາດຕາ 10 ຂອງກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ ສະບັບເລກທີ 55/ສພຊ, ລົງວັນ



ທະນາຄານແຫ່ງ ສປປ ລາວ, ຖະໜົນ ຍອນເນ, ນະຄອນຫຼວງວຽງຈັນ, ຕູ້ໄປສະນີ 19, ໂທລະພິມ: 4304 **BNL.VTE.LS**
ໂທລະສານ: (856)-21-213108 ໂທລະສັບ: 213109-213110 **Email: BOL@bol.gov.la; www.bol.gov.la**

ທີ 22 ທັນວາ 2014 ແລະ ຕ້ອງໂອນຊຳລະສະສາງຜ່ານລະບົບທະນາຄານພຽງເທົ່ານັ້ນ ໃຫ້ແກ່ຜູ້ສະໜອງສິນຄ້າ ແລະ ການບໍລິການ ຍົກເວັ້ນກໍລະນີລະບຽບກົດໝາຍໄດ້ກຳນົດໄວ້ເປັນຢ່າງອື່ນ.

**ມາດຕາ 3** ຂໍ້ຕົກລົງສະບັບນີ້ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ ແລະ ໃຊ້ປ່ຽນແທນຂໍ້ຕົກລົງວ່າດ້ວຍການສະໜອງສິນເຊື່ອເປັນເງິນຕາຕ່າງປະເທດຂອງທະນາຄານທຸລະກິດ ສະບັບເລກທີ 1008/ທຫລ, ລົງວັນທີ 17 ພະຈິກ 2016. ບັນດາຂໍ້ຕົກລົງ ແລະ ລະບຽບການທີ່ນຳໃຊ້ໃນເມື່ອກ່ອນທີ່ຂັດກັບຂໍ້ຕົກລົງສະບັບນີ້ລ້ວນແຕ່ຖືກຍົກເລີກ.

**ຜູ້ວ່າການທະນາຄານແຫ່ງ ສປປ ລາວ**

ສົມພາວ ໄຟສິດ